ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ......113........./ປປທ

ນະຄອນຫຼວງວຽງຈັນ, ວັນທີ.....21.6.2017.....

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
### ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍອົງການໄອຍະການປະຊາຊົນ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 08/ສພຊ, ລົງວັນທີ 10 ພຶດສະພາ 2017 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍອົງການໄອຍະການປະຊາຊົນ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 013/ຄປຈ, ລົງວັນທີ 08 ມິຖຸນາ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍ ວ່າດ້ວຍອົງການໄອຍະການປະຊາຊົນ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 08 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 10/05/17

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ (ສະບັບປັບປຸງ)

---

ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ (ສະບັບປັບປຸງ) ໃນວາລະກອງປະຊຸມຕອນເຊົ້າຂອງ ວັນທີ 10 ພຶດສະພາ 2017.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 21 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 10 ພຶດສະພາ 2017

# ກົດໝາຍ
# ວ່າດ້ວຍອົງການໄອຍະການປະຊາຊົນ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ ແລະ ການຕິດຕາມກວດກາຂອງອົງການໄອຍະການປະຊາຊົນ ເພື່ອຮັບປະກັນການປະຕິບັດໜ້າທີ່ວຽກງານໄອຍະການໃຫ້ມີປະສິດທິພາບສູງ ແນໃສ່ປົກປ້ອງຜົນປະໂຫຍດຂອງລັດ, ສັງຄົມ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ, ເພີ່ມທະວີນິຕິທຳ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ອົງການໄອຍະການປະຊາຊົນ**

ອົງການໄອຍະການປະຊາຊົນ ແມ່ນ ອົງການລັດ ທີ່ເຮັດໜ້າທີ່ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ໃນຂອບເຂດທົ່ວປະເທດ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ຕາມກົດໝາຍ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພະນັກງານ-ລັດຖະກອນ ອົງການໄອຍະການປະຊາຊົນ** ໝາຍເຖິງ ຫົວໜ້າ, ຮອງຫົວໜ້າອົງການໄອຍະການປະຊາຊົນ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ, ພະນັກງານວິຊາການກົດໝາຍ, ພະນັກງານບໍລິຫານ ແລະ ພະນັກງານອົງການໄອຍະການທະຫານ;

2. **ພະນັກງານໄອຍະການປະຊາຊົນ** ໝາຍເຖິງ ພະນັກງານ ທີ່ໄດ້ຮັບການແຕ່ງຕັ້ງໃຫ້ປະຕິບັດໜ້າທີ່ ຕາມກົດໝາຍ ແລະ ຕາມການມອບໝາຍ ຂອງຫົວໜ້າອົງການໄອຍະການປະຊາຊົນ ໃຫ້ປະຕິບັດໜ້າທີ່ຕິດຕາມກວດກາ, ສອບສວນ ແລະ ເຂົ້າຮ່ວມປະຊຸມສານ;

3. **ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ** ໝາຍເຖິງ ພະນັກງານ ທີ່ໄດ້ຮັບການແຕ່ງຕັ້ງ ແລະ ມອບໝາຍໃຫ້ປະຕິບັດວຽກງານຊ່ວຍພະນັກງານໄອຍະການປະຊາຊົນ;

4. **ພະນັກງານອົງການໄອຍະການທະຫານ** ໝາຍເຖິງ ຫົວໜ້າ, ຮອງຫົວໜ້າ, ບັນດາພະນັກງານໄອຍະການທະຫານ, ຜູ້ຊ່ວຍພະນັກງານໄອຍະການທະຫານ, ພະນັກງານວິຊາການກົດໝາຍ ແລະ ພະນັກງານບໍລິຫານ;

5. **ນິຕິທຳ** ໝາຍເຖິງ ການເຄົາລົບ ແລະ ປະຕິບັດກົດໝາຍ ຢ່າງຖືກຕ້ອງ ແລະ ເຂັ້ມງວດ;

6. **ຄຳສັ່ງຟ້ອງ** ໝາຍເຖິງ ການອອກຄຳສັ່ງຟ້ອງ ໂດຍຫົວໜ້າອົງການໄອຍະການປະຊາຊົນ ຊຶ່ງໄດ້ຕັ້ງຂໍ້ກ່າວຫາໃສ່ຜູ້ຖືກຫາ ເພື່ອໃຫ້ສານພິຈາລະນາຕັດສິນ;

7. **ຄຳຖະແຫຼງ** ໝາຍເຖິງ ຄຳເຫັນ ຢ່າງເປັນລາຍລັກອັກສອນ ຂອງຫົວໜ້າອົງການໄອຍະການປະຊາຊົນ ທີ່ໄຈ້ແຍກການກະທຳຜິດຂອງຈຳເລີຍ ຕໍ່ທີ່ປະຊຸມສານ;

8. **ສະຖານທີ່ກັກຕົວ** ໝາຍເຖິງ ບ່ອນຄວບຄຸມຕົວຜູ້ຖືກສົງໃສ ພາຍໃນກຳນົດເວລາ ຕາມທີ່ກົດໝາຍໄດ້ກຳນົດໄວ້;

9. **ສະຖານທີ່ກັກຂັງ** ໝາຍເຖິງ ບ່ອນຄຸມຂັງຜູ້ຖືກຫາ ຫຼື ຈຳເລີຍ ໃນໄລຍະດຳເນີນຄະດີກ່ອນຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ;

10. **ຄ້າຍດັດສ້າງ** ໝາຍເຖິງ ສະຖານທີ່ປະຕິບັດໂທດ ຂອງນັກໂທດ ຕາມຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;

11. **ສູນດັດສ້າງ** ໝາຍເຖິງ ສະຖານທີ່ສຶກສາອົບຮົມ, ດັດສ້າງທາງດ້ານບໍລິຫານ ຕໍ່ຜູ້ກະທຳຜິດທາງອາຍາໃນສະຖານເບົາ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານ ຂອງອົງການໄອຍະການປະຊາຊົນ**

ລັດ ສົ່ງເສີມ ແລະ ສ້າງເງື່ອນໄຂສະດວກໃນດ້ານຕ່າງໆ ໃຫ້ແກ່ການເຄື່ອນໄຫວປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນ ດ້ວຍການວາງນະໂຍບາຍ, ກົດໝາຍ, ລະບຽບການ, ບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ ແນໃສ່ເຮັດໃຫ້ການຕິດຕາມກວດກາການປະຕິບັດກົດໝາຍ ແລະ ສັ່ງຟ້ອງຄະດີມີປະສິດທິຜົນ, ໂປ່ງໃສ ແລະ ຍຸຕິທຳ, ປະກອບສ່ວນເຂົ້າໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມໃຫ້ມີຄວາມເຂັ້ມແຂງ, ທັງຮັບປະກັນຜົນປະໂຫຍດຂອງລັດ, ສັງຄົມ, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງພົນລະເມືອງ.

ລັດ ສົ່ງເສີມ ແລະ ຊຸກຍູ້ການໂຄສະນາ, ສຶກສາອົບຮົມກົດໝາຍໃຫ້ຮັບຮູ້, ເຂົ້າໃຈ ແລະ ປະຕິບັດໃຫ້ຖືກຕ້ອງ, ເຂັ້ມງວດ ເພື່ອຮັບປະກັນຄວາມໝັ້ນຄົງໃຫ້ແກ່ລັດປະຊາທິປະໄຕປະຊາຊົນ ທີ່ປົກຄອງດ້ວຍກົດໝາຍ.

**ມາດຕາ 5 ຫຼັກການ ກ່ຽວກັບວຽກງານ ຂອງອົງການໄອຍະການປະຊາຊົນ**

ອົງການໄອຍະການປະຊາຊົນ ເຄື່ອນໄຫວວຽກງານ ບົນພື້ນຖານຫຼັກການ ດັ່ງນີ້:

1. ຮັບປະກັນ ຄວາມສັກສິດຂອງກົດໝາຍ;
2. ຮັບປະກັນ ການຕິດຕາມກວດກາການປະຕິບັດກົດໝາຍຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ;
3. ຮັບປະກັນ ຄວາມຊັດເຈນ, ຍຸຕິທຳ, ທັນເວລາ ແລະ ເປີດເຜີຍຕາມລະບຽບການ;
4. ຮັບປະກັນ ລະບອບລວມສູນເປັນເອກະພາບຕາມສາຍຕັ້ງ ແລະ ລະບອບຫົວໜ້າ;
5. ຮັບປະກັນ ໃຫ້ຜູ້ກະທຳຜິດໄດ້ຮັບການລົງໂທດຕາມກົດໝາຍ ແລະ ບໍ່ໃຫ້ຜູ້ບໍ່ໄດ້ກະທຳຜິດຖືກລົງໂທດ;
6. ຮັບປະກັນ ການປະສານສົມທົບກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງໃນການປະຕິບັດວຽກງານ.

ມາດຕາ 6 ການພິຈາລະນາ ຄຳຮ້ອງຟ້ອງ ແລະ ຄຳສະເໜີ

ຫົວໜ້າອົງການໄອຍະການປະຊາຊົນທຸກຂັ້ນ ພິຈາລະນາຄຳຮ້ອງຟ້ອງ ແລະ ຄຳສະເໜີ ຂອງອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ ແລະ ພົນລະເມືອງ ຕາມກຳນົດເວລາ ທີ່ກົດໝາຍກຳນົດໄວ້, ວາງມາດຕະການທີ່ຈຳເປັນ ເພື່ອຟື້ນຟູສິດທີ່ໄດ້ຖືກລະເມີດ, ປົກປັກຮັກສາສິດ ແລະ ຜົນປະໂຫຍດ ຂອງການຈັດຕັ້ງດັ່ງກ່າວ, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງພົນລະເມືອງ.

ມາດຕາ 7 (ປັບປຸງ) ການປົກປ້ອງ

ພະນັກງານ-ລັດຖະກອນອົງການໄອຍະການປະຊາຊົນ ລວມທັງຜູ້ເຂົ້າຮ່ວມໃນວຽກງານຕິດຕາມກວດກາ ເຊັ່ນ ຜູ້ລາຍງານ, ຜູ້ໃຫ້ຂໍ້ມູນ ຂ່າວສານ, ພະຍານ, ຜູ້ຊ່ຽວຊານ ຕ້ອງໄດ້ຮັບການປົກປ້ອງຕາມກົດໝາຍຈາກການບັງຄັບ, ນາບຂູ່ ແລະ ພຶດຕິກຳ ທີ່ເປັນອັນຕະລາຍ ຕໍ່ຊີວິດ, ສຸຂະພາບ, ກຽດສັກສີ ຫຼື ຊັບສິນ.

ມາດຕາ 8 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຂອງອົງການໄອຍະການປະຊາຊົນ ເປັນຕົ້ນ ການຮ່ວມມືທາງດ້ານກົດໝາຍ ແລະ ຍຸຕິທຳ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ ຫຼື ສຳມະນາ, ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ ເພື່ອພັດທະນາວຽກງານ ຂອງອົງການໄອຍະການປະຊາຊົນ ໃຫ້ມີຄຸນນະພາບ, ເຂັ້ມແຂງ ແລະ ທັນສະໄໝ ລວມທັງການປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ອົງການໄອຍະການປະຊາຊົນ
### ໝວດທີ 1
### ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່

ມາດຕາ 9 ທີ່ຕັ້ງ ແລະ ພາລະບົດບາດ ຂອງອົງການໄອຍະການປະຊາຊົນ

ອົງການໄອຍະການປະຊາຊົນ ແມ່ນ ອົງການຕິດຕາມກວດກາຂອງລັດ, ມີພາລະບົດບາດຕິດຕາມ ແລະ ກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ, ພົນລະເມືອງ ເພື່ອໃຫ້ມີຄວາມຖືກຕ້ອງ, ເປັນເອກະພາບ ແລະ ສົ່ງຟ້ອງຜູ້ຖືກຫາຂຶ້ນສານ ຕາມກົດໝາຍ.

ມາດຕາ 10 ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ

ອົງການໄອຍະການປະຊາຊົນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ ແລະ ພົນລະເມືອງ. ການຕິດຕາມກວດການີ້ ເອີ້ນວ່າ ການຕິດຕາມກວດກາທົ່ວໄປ;

2. ຕິດຕາມກວດກາ ການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ;

3. ດຳເນີນການສືບສວນ-ສອບສວນຄະດີໃດໜຶ່ງ ເປັນທັງໝົດ ຫຼື ບາງສ່ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

4. ສັ່ງຟ້ອງຜູ້ຖືກຫາ ຂຶ້ນສານ;

5. ຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີຢູ່ສານ;

6. ຕິດຕາມກວດກາການປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;

7. ຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານ;

8. ຕິດຕາມກວດກາການຄົ້ນຄວ້າ, ການສະເໜີ ແລະ ການຈັດຕັ້ງປະຕິບັດ ການໃຫ້ອະໄພຍະໂທດ ຕາມລັດຖະດຳລັດ ຂອງປະທານປະເທດ;

9. ປະສານສົມທົບກັບອົງການສືບສວນ-ສອບສວນ ແລະ ອົງການອື່ນທີ່ກ່ຽວຂ້ອງດຳເນີນການສະກັດກັ້ນ, ຕ້ານອາຊະຍາກຳ ຫຼື ການກະທຳຜິດ ແລະ ການລະເມີດກົດໝາຍ ພ້ອມທັງລົບລ້າງບັນດາສາເຫດ ແລະ ເງື່ອນໄຂທີ່ພາໃຫ້ການກະທຳຜິດເກີດຂຶ້ນ;

10. ຮື້ຟື້ນຄະດີ ຕາມກົດໝາຍ ໃນກໍລະນີທີ່ມີຫຼັກຖານໃໝ່;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ລະບົບການຈັດຕັ້ງອົງການໄອຍະການປະຊາຊົນ

### ມາດຕາ 11 (ປັບປຸງ) ລະບົບການຈັດຕັ້ງອົງການໄອຍະການປະຊາຊົນ

ລະບົບການຈັດຕັ້ງອົງການໄອຍະການປະຊາຊົນ ປະກອບດ້ວຍ:

1. ອົງການໄອຍະການປະຊາຊົນສູງສຸດ;
2. ອົງການໄອຍະການປະຊາຊົນທ້ອງຖິ່ນ;

   ອົງການໄອຍະການປະຊາຊົນທ້ອງຖິ່ນ ມີ:

   - ອົງການໄອຍະການປະຊາຊົນພາກ;
   - ອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ;
   - ອົງການໄອຍະການປະຊາຊົນເຂດ.
3. ອົງການໄອຍະການທະຫານ.

### ມາດຕາ 12 ອົງການໄອຍະການປະຊາຊົນສູງສຸດ

ອົງການໄອຍະການປະຊາຊົນສູງສຸດ ແມ່ນ ອົງການຕິດຕາມກວດກາສູງສຸດ ຂອງລະບົບອົງການໄອຍະການປະຊາຊົນ, ມີພາລະບົດບາດຊີ້ນຳ, ນຳພາ ອົງການໄອຍະການປະຊາຊົນຂັ້ນລຸ່ມ ແລະ ອົງການໄອຍະການທະຫານ ໃນການຕິດຕາມ ກວດກາການປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ໃນທົ່ວປະເທດ.

### ມາດຕາ 13 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນສູງສຸດ

ອົງການໄອຍະການປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມກວດກາ ການປະຕິບັດກົດໝາຍ ໃນຂອບເຂດທົ່ວປະເທດ;

2. ຕິດຕາມກວດກາ ການປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນຂັ້ນລຸ່ມ ແລະ ອົງການໄອຍະການທະຫານ;

3. ແນະນຳ, ອະທິບາຍ ເນື້ອໃນຂອງກົດໝາຍ ໃນຂົງເຂດທີ່ຕົນຮັບຜິດຊອບ ແລະ ສະໜອງຂໍ້ມູນ ຂ່າວສານທາງດ້ານກົດໝາຍ ໃຫ້ອົງການໄອຍະການປະຊາຊົນຂັ້ນລຸ່ມ ແລະ ອົງການໄອຍະການທະຫານ;

4. ອຳນວຍຄວບຄຸມ, ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການໄອຍະການປະຊາຊົນ ຂັ້ນຂອງຕົນ ແລະ ຂັ້ນລຸ່ມ;

5. ສ້າງແຜນບຳລຸງ ແລະ ຍົກລະດັບພະນັກງານ ຂອງອົງການໄອຍະການປະຊາຊົນ;

6. ຄົ້ນຄວ້າ ແລະ ສັງລວມ ການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນ, ວຽກງານສະຖິຕິຄະດີ, ຜູ້ຖືກຫາ, ຜູ້ຖືກດັດສ້າງ ແລະ ນັກໂທດ ໃນທົ່ວປະເທດ;

7. ປະສານສົມທົບ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດໜ້າທີ່ວຽກງານຂອງຕົນ;

8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານກົດໝາຍ ແລະ ຍຸຕິທຳ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 14 (ປັບປຸງ) ອົງການໄອຍະການປະຊາຊົນພາກ**

ອົງການໄອຍະການປະຊາຊົນພາກ ແມ່ນ ອົງການໜຶ່ງໃນລະບົບອົງການໄອຍະການປະຊາຊົນ, ມີພາລະບົດບາດ ຕິດຕາມກວດກາ ການປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ໃນຂອບເຂດພາກທີ່ຕົນຮັບຜິດຊອບ.

ອົງການໄອຍະການປະຊາຊົນພາກ ສ້າງຕັ້ງຂຶ້ນຢູ່ ພາກເໜືອ, ພາກກາງ ແລະ ພາກໃຕ້ ຂອງ ສປປ ລາວ.

ອົງການໄອຍະການປະຊາຊົນພາກ ຕັ້ງຢູ່ນະຄອນຫຼວງ ຫຼື ແຂວງໃດໜຶ່ງ ໂດຍກວມເອົານະຄອນຫຼວງ, ແຂວງຈຳນວນໜຶ່ງ ແລະ ທີ່ຕັ້ງ ຂອງອົງການໄອຍະການປະຊາຊົນພາກ ໃນແຕ່ລະພາກນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 15 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນພາກ**

ອົງການໄອຍະການປະຊາຊົນພາກ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມກວດກາ ການປະຕິບັດກົດໝາຍ;

2. ຕິດຕາມກວດກາ ການປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ;

3. ແນະນຳ ແລະ ສະໜອງຂໍ້ມູນ ຂ່າວສານທາງດ້ານກົດໝາຍ ໃຫ້ແກ່ອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ;

4. ອຳນວຍຄວບຄຸມ, ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການໄອຍະການປະຊາຊົນຂັ້ນຂອງຕົນ;

5. ຄົ້ນຄວ້າ ແລະ ສັງລວມ ການລາຍງານກ່ຽວກັບການປະຕິບັດວຽກງານ ຂອງອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ, ວຽກງານສະຖິຕິຄະດີ, ຜູ້ຖືກຫາ, ຜູ້ຖືກດັດສ້າງ ແລະ ນັກໂທດ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 16 (ປັບປຸງ) ອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ**

ອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ ແມ່ນ ອົງການໜຶ່ງໃນລະບົບອົງການໄອຍະການປະຊາຊົນ, ມີພາລະບົດບາດຕິດຕາມກວດກາ ການປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ຢູ່ໃນຂອບເຂດ ແຂວງ, ນະຄອນຫຼວງ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ.

**ມາດຕາ 17 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ**

ອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມກວດກາ ການປະຕິບັດກົດໝາຍ;
2. ຕິດຕາມກວດກາ ການປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນເຂດ;
3. ແນະນຳ ແລະ ສະໜອງຂໍ້ມູນ ຂ່າວສານທາງດ້ານກົດໝາຍ ໃຫ້ແກ່ອົງການໄອຍະການປະຊາຊົນເຂດ;
4. ອຳນວຍຄວບຄຸມ, ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການໄອຍະການປະຊາຊົນຂັ້ນຂອງຕົນ ແລະ ອົງການໄອຍະການປະຊາຊົນເຂດ;
5. ຄົ້ນຄວ້າ ແລະ ສັງລວມການລາຍງານກ່ຽວກັບການປະຕິບັດວຽກງານ ຂອງອົງການໄອຍະການປະຊາຊົນເຂດ; ວຽກງານສະຖິຕິຄະດີ, ຜູ້ຖືກຫາ, ຜູ້ຖືກດັດສ້າງ ແລະ ນັກໂທດ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 18 (ປັບປຸງ) ອົງການໄອຍະການປະຊາຊົນເຂດ**

ອົງການໄອຍະການປະຊາຊົນເຂດ ແມ່ນ ອົງການໜຶ່ງໃນລະບົບອົງການໄອຍະການປະຊາຊົນ, ມີພາລະບົດບາດຕິດຕາມກວດກາ ການປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ.

ອົງການໄອຍະການປະຊາຊົນເຂດ ສ້າງຕັ້ງຂຶ້ນ ໂດຍເອົາຫຼາຍເມືອງ, ເທດສະບານ, ນະຄອນ ມາໂຮມເຂົ້າກັນເປັນເຂດໜຶ່ງ ຕາມສະພາບພູມສາດ, ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ຫຼື ມີຄະດີເກີດຂຶ້ນຫຼາຍ.

ເມືອງ, ເທດສະບານ, ນະຄອນໃດ ຫາກມີເງື່ອນໄຂຄົບຖ້ວນ ກໍສາມາດສ້າງຕັ້ງອົງການໄອຍະການປະຊາຊົນຂຶ້ນກໍໄດ້.

ສຳລັບ ເມືອງ, ເທດສະບານ, ນະຄອນ ທີ່ບໍ່ມີອົງການໄອຍະການປະຊາຊົນເຂດຕັ້ງຢູ່ນັ້ນ ໃຫ້ມີພະນັກງານໄອຍະການປະຊາຊົນ ຫຼື ພະນັກງານວິຊາການກົດໝາຍ ຂອງອົງການໄອຍະການປະຊາຊົນເຂດ ຈຳນວນ ສາມ ຫາ ຫ້າ ຄົນປະຈຳຢູ່ ຕາມການແຕ່ງຕັ້ງ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເພື່ອປະຕິບັດສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນເຂດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 19 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນເຂດ**

ອົງການໄອຍະການປະຊາຊົນເຂດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມກວດກາ ການປະຕິບັດກົດໝາຍ;
2. ອຳນວຍຄວບຄຸມ, ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວ;
3. ຄົ້ນຄວ້າ ແລະ ສັງລວມ ການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ເກັບກຳສະຖິຕິຄະດີ, ຜູ້ຖືກຫາ ແລະ ນັກໂທດ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ອົງການໄອຍະການປະຊາຊົນ ເມືອງ, ເທດສະບານ, ນະຄອນໃດ ທີ່ຖືກສ້າງຕັ້ງຂຶ້ນ ມີ ສິດ ແລະ ໜ້າທີ່ ຄືກັນກັບອົງການໄອຍະການປະຊາຊົນເຂດ.

ມາດຕາ 20 (ປັບປຸງ) ອົງການໄອຍະການທະຫານ

ອົງການໄອຍະການທະຫານ ແມ່ນ ອົງການໜຶ່ງໃນລະບົບອົງການໄອຍະການປະຊາຊົນ ຊຶ່ງມີລະບົບການຈັດຕັ້ງ, ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່, ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອົງການໄອຍະການທະຫານ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

ມາດຕາ 21 (ປັບປຸງ) ໂຄງປະກອບການຈັດຕັ້ງ

ອົງການໄອຍະການປະຊາຊົນ ມີໂຄງປະກອບການຈັດຕັ້ງ ດັ່ງນີ້:

1. ອົງການໄອຍະການປະຊາຊົນສູງສຸດ ມີ ຄະນະກຳມະການໄອຍະການປະຊາຊົນ, ຫ້ອງການ, ບັນດາກົມ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ ແລະ ບັນດາພະແນກ;

2. ອົງການໄອຍະການປະຊາຊົນພາກ ມີ ຄະນະກຳມະການໄອຍະການປະຊາຊົນ, ຫ້ອງການ ແລະ ບັນດາພະແນກ;

3. ອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ ມີ ຄະນະກຳມະການໄອຍະການປະຊາຊົນ, ຫ້ອງການ ແລະ ບັນດາຂະແໜງ;

4. ອົງການໄອຍະການປະຊາຊົນເຂດ ມີຄະນະກຳມະການໄອຍະການປະຊາຊົນ, ຫ້ອງການ ແລະ ບັນດາໜ່ວຍງານ.

ອົງການໄອຍະການປະຊາຊົນ ເມືອງ, ເທດສະບານ, ນະຄອນ ທີ່ຖືກສ້າງຕັ້ງຂຶ້ນ ມີໂຄງປະກອບການຈັດຕັ້ງ ຄືກັນກັບອົງການໄອຍະການປະຊາຊົນເຂດ.

ການເຄື່ອນໄຫວຂອງອົງການໄອຍະການປະຊາຊົນ ແລະ ພະນັກງານອົງການໄອຍະການປະຊາຊົນເຂດປະຈຳເມືອງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 22 (ປັບປຸງ) ຄະນະກຳມະການໄອຍະການປະຊາຊົນສູງສຸດ

ຄະນະກຳມະການໄອຍະການປະຊາຊົນສູງສຸດ ແມ່ນ ການຈັດຕັ້ງຂອງອົງການໄອຍະການປະຊາຊົນສູງສຸດ, ມີພາລະບົດບາດ ຕົກລົງບັນຫາທີ່ມີຄວາມສຳຄັນ ແລະ ມີລັກສະນະຍຸດທະສາດ ກ່ຽວກັບວຽກງານຂອງອົງການໄອຍະການປະຊາຊົນ ເພື່ອຮັບປະກັນໃຫ້ລະບົບອົງການໄອຍະການປະຊາຊົນເຄື່ອນໄຫວຢ່າງມີປະສິດທິພາບ.

ຄະນະກຳມະການໄອຍະການປະຊາຊົນສູງສຸດ ປະກອບດ້ວຍ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນປະທານ, ບັນດາຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນຮອງປະທານ, ຫົວໜ້າຫ້ອງການ, ບັນດາຫົວໜ້າກົມ ແລະ ພະນັກງານໄອຍະການປະຊາຊົນຈຳນວນໜຶ່ງ ຂອງອົງການໄອຍະການປະຊາຊົນສູງສຸດ ເປັນກຳມະການ ໂດຍແມ່ນຄະນະປະຈຳສະພາແຫ່ງຊາດ ເປັນຜູ້ແຕ່ງຕັ້ງ ຕາມການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ຈຳນວນສະມາຊິກ ຂອງຄະນະກຳມະການໄອຍະການປະຊາຊົນສູງສຸດ ບໍ່ໃຫ້ເກີນ ສິບຫ້າຄົນ.

ຄະນະກຳມະການໄອຍະການປະຊາຊົນສູງສຸດ ເຄື່ອນໄຫວວຽກງານຂອງຕົນ ດ້ວຍການເປີດກອງປະຊຸມຢ່າງໜ້ອຍ ສາມເດືອນ ຕໍ່ເທື່ອ ຕາມການຮຽກໂຮມ ຂອງປະທານຄະນະກຳມະການໄອຍະການປະຊາຊົນສູງສຸດ.

ມະຕິກອງປະຊຸມ ຂອງຄະນະກຳມະການໄອຍະການປະຊາຊົນສູງສຸດ ຖືເອົາຕາມສຽງສ່ວນຫຼາຍ. ໃນກໍລະນີມີຄະແນນສຽງເທົ່າກັນ ໃຫ້ຖືເອົາຄຳເຫັນຂອງປະທານຄະນະກຳມະການໄອຍະການປະຊາຊົນສູງສຸດ ເປັນອັນຊີ້ຂາດ.

ມາດຕາ 23 (ໃໝ່) ຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ

ຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ ແມ່ນ ການຈັດຕັ້ງ ຂອງອົງການໄອຍະການປະຊາຊົນທ້ອງຖິ່ນ, ມີພາລະບົດບາດ ພິຈາລະນາບັນຫາກ່ຽວກັບວຽກງານໄອຍະການປະຊາຊົນທີ່ມີຄວາມສຳຄັນ ແລະ ມີລັກສະນະຍຸດທະສາດ ເພື່ອຮັບປະກັນໃຫ້ລະບົບອົງການໄອຍະການປະຊາຊົນທ້ອງຖິ່ນ ເຄື່ອນໄຫວຢ່າງມີປະສິດທິພາບ.

ຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ ປະກອບດ້ວຍ ຫົວໜ້າອົງການໄອຍະການປະຊາຊົນ ເປັນປະທານ, ບັນດາຮອງຫົວໜ້າອົງການໄອຍະການປະຊາຊົນ ເປັນຮອງປະທານ, ຫົວໜ້າຫ້ອງການ, ບັນດາຫົວໜ້າ ພະແນກ, ຂະແໜງ, ໜ່ວຍງານ ແລະ ພະນັກງານໄອຍະການປະຊາຊົນຈຳນວນໜຶ່ງ ຂອງອົງການໄອຍະການປະຊາຊົນທ້ອງຖິ່ນ ເປັນກຳມະການ ໂດຍແມ່ນຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ແຕ່ງຕັ້ງ ຕາມການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນທ້ອງຖິ່ນ.

ຈຳນວນສະມາຊິກ ຂອງຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ ບໍ່ໃຫ້ເກີນ ເກົ້າຄົນ.

ຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ ເຄື່ອນໄຫວວຽກງານຂອງຕົນ ດ້ວຍການເປີດກອງປະຊຸມຢ່າງໜ້ອຍ ສາມເດືອນ ຕໍ່ເທື່ອ ຕາມການຮຽກໂຮມ ຂອງປະທານຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ.

ມະຕິກອງປະຊຸມຂອງຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ ຖືເອົາຕາມສຽງສ່ວນຫຼາຍ. ໃນກໍລະນີທີ່ມີຄະແນນສຽງເທົ່າກັນ ໃຫ້ຖືເອົາຄຳເຫັນຂອງປະທານຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ ເປັນອັນຊີ້ຂາດ.

ມາດຕາ 24 (ປັບປຸງ) ໂຄງປະກອບບຸກຄະລາກອນ ຂອງອົງການໄອຍະການປະຊາຊົນ

ອົງການໄອຍະການປະຊາຊົນ ປະກອບດ້ວຍ ບຸກຄະລາກອນ ດັ່ງນີ້:

1. ຫົວໜ້າອົງການໄອຍະການປະຊາຊົນສູງສຸດ;
2. ບັນດາຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໃນນີ້ ໜຶ່ງທ່ານ ເປັນຫົວໜ້າອົງການໄອຍະການທະຫານຂັ້ນສູງ;
3. ຫົວໜ້າອົງການໄອຍະການປະຊາຊົນພາກ, ບັນດາຮອງຫົວໜ້າອົງການໄອຍະການປະຊາຊົນພາກ;
4. ຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ, ບັນດາຮອງຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ;
5. ຫົວໜ້າອົງການໄອຍະການປະຊາຊົນເຂດ, ບັນດາຮອງຫົວໜ້າອົງການໄອຍະການປະຊາຊົນເຂດ.

ນອກຈາກນີ້ ອົງການໄອຍະການປະຊາຊົນແຕ່ລະຂັ້ນ ຍັງມີບັນດາພະນັກງານໄອຍະການປະຊາຊົນ, ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ, ພະນັກງານວິຊາການກົດໝາຍ ແລະ ພະນັກງານບໍລິຫານ.

ອົງການໄອຍະການປະຊາຊົນ ເມືອງ, ເທດສະບານ, ນະຄອນໃດ ຫາກໄດ້ສ້າງຕັ້ງຂຶ້ນ ກໍມີໂຄງປະກອບບຸກຄະລາກອນ ຄືກັນກັບອົງການໄອຍະການປະຊາຊົນເຂດ.

ມາດຕາ 25 (ປັບປຸງ) ມາດຕະຖານຂອງຫົວໜ້າອົງການໄອຍະການປະຊາຊົນ ແລະ ພະນັກງານໄອຍະການປະຊາຊົນ

ຫົວໜ້າອົງການໄອຍະການປະຊາຊົນ ແລະ ພະນັກງານໄອຍະການປະຊາຊົນ ຕ້ອງມີມາດຕະຖານລວມ ດັ່ງນີ້:

1. ເປັນພົນລະເມືອງລາວ ໂດຍກຳເນີດ, ມີອາຍຸແຕ່ ຊາວຫ້າປີ ຂຶ້ນໄປ;
2. ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຈັນຍາທຳດີ, ມີຄວາມສັດຊື່ບໍລິສຸດ ຕໍ່ການປະຕິບັດໜ້າທີ່ຂອງຕົນ;

3. ມີລະດັບການສຶກສາດ້ານກົດໝາຍ ແຕ່ຊັ້ນສູງຂຶ້ນໄປ, ໄດ້ຜ່ານການຝຶກອົບຮົມຫຼັກສູດວຽກງານໄອຍະການ;

4. ບໍ່ເຄີຍຖືກລົງໂທດທາງອາຍາ ໃນການກະທຳຜິດໂດຍເຈດຕະນາ;

5. ມີສຸຂະພາບດີ.

ຫົວໜ້າອົງການໄອຍະການປະຊາຊົນ ແລະ ພະນັກງານໄອຍະການປະຊາຊົນ ຍັງມີມາດຕະຖານສະເພາະ, ຊັ້ນ ແລະ ຂັ້ນຂອງຕົນ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ມາດຕາ 26 (ປັບປຸງ) ການເລືອກຕັ້ງ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍສະພາແຫ່ງຊາດ ຕາມການສະເໜີຂອງປະທານປະເທດ, ມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ.

ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດ ຕາມການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ຫົວໜ້າອົງການໄອຍະການປະຊາຊົນ ພາກ, ແຂວງ, ນະຄອນຫຼວງ, ເຂດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພາຍຫຼັງທີ່ສະພາປະຊາຊົນຂັ້ນແຂວງ ບ່ອນທີ່ອົງການໄອຍະການປະຊາຊົນນັ້ນຕັ້ງຢູ່ ພິຈາລະນາຮັບຮອງເອົາ.

ຮອງຫົວໜ້າອົງການໄອຍະການປະຊາຊົນ ພາກ, ແຂວງ, ນະຄອນຫຼວງ, ເຂດ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ, ພະນັກງານວິຊາການກົດໝາຍ ແລະ ພະນັກງານບໍລິຫານ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ, ຫົວໜ້າ ແລະ ຮອງຫົວໜ້າ ອົງການໄອຍະການທະຫານພາກ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕາມການສະເໜີຂອງຫົວໜ້າອົງການໄອຍະການທະຫານຂັ້ນສູງ.

ພະນັກງານໄອຍະການທະຫານ, ຜູ້ຊ່ວຍພະນັກງານໄອຍະການທະຫານ, ພະນັກງານວິຊາການກົດໝາຍ ແລະ ພະນັກງານບໍລິຫານ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຫົວໜ້າອົງການໄອຍະການທະຫານຂັ້ນສູງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອົງການໄອຍະການທະຫານ.

## ມາດຕາ 27 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊີ້ນຳ ແລະ ນຳພາ ການຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດກົດໝາຍ ໃນຂອບເຂດທົ່ວປະເທດ;
2. ຊີ້ນຳ, ນຳພາ ແລະ ກວດກາ ການປະຕິບັດວຽກງານ ຂອງພະນັກງານຢູ່ອົງການໄອຍະການປະຊາຊົນ;
3. ຊີ້ນຳວຽກງານຄົ້ນຄວ້າ, ສະເໜີຮ່າງກົດໝາຍ ແລະ ນິຕິກຳອື່ນ ຕໍ່ກອງປະຊຸມສະພາແຫ່ງຊາດ ຫຼື ຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;
4. ສະເໜີຄະນະປະຈຳສະພາແຫ່ງຊາດ ຕີຄວາມໝາຍບົດບັນຍັດໃດໜຶ່ງຂອງກົດໝາຍ ເພື່ອປະຕິບັດໃຫ້ຖືກຕ້ອງ ແລະ ເປັນເອກະພາບ;
5. ໃຫ້ຄວາມເຫັນກ່ຽວກັບການດຳເນີນຄະດີອາຍາ ຊຶ່ງຫົວໜ້າ, ຮອງຫົວໜ້າ ອົງການໄອຍະການປະຊາຊົນ, ພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ ທີ່ຖືກຫາວ່າເປັນຜູ້ກະທຳຜິດ;
6. ລຶບລ້າງຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນຂັ້ນລຸ່ມ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

7. ເຮັດຄຳຖະແຫຼງ ກ່ຽວກັບຄະດີ ຕໍ່ສານປະຊາຊົນສູງສຸດ;

8. ສະເໜີ ຄັດຄ້ານຄຳຕັດສິນ ຫຼື ຄຳພິພາກສາ ຂອງສານປະຊາຊົນ;

9. ສະເໜີ ຮື້ຟື້ນຄະດີຕໍ່ສານປະຊາຊົນສູງສຸດ ໃນກໍລະນີທີ່ພົບເຫັນຫຼັກຖານໃໝ່;

10. ສະເໜີ ປະທານປະເທດ ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ;

11. ກຳນົດໂຄງປະກອບກົງຈັກການຈັດຕັ້ງ, ຈຳນວນບຸກຄະລາກອນ ຂອງອົງການໄອຍະການປະຊາຊົນ;

12. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ, ຮອງຫົວໜ້າ ອົງການໄອຍະການປະຊາຊົນ, ຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ, ພະນັກງານວິຊາການກົດໝາຍ ແລະ ພະນັກງານບໍລິຫານຂອງອົງການໄອຍະການປະຊາຊົນ;

13. ຮຽກໂຮມ ແລະ ເປັນປະທານກອງປະຊຸມຄະນະກຳມະການໄອຍະການປະຊາຊົນ;

14. ເຂົ້າຮ່ວມ ກອງປະຊຸມໃຫຍ່ຜູ້ພິພາກສາ ແລະ ລາຍງານ ຕໍ່ຄະນະປະຈຳສະພາແຫ່ງຊາດ ກ່ຽວກັບມະຕິກອງປະຊຸມໃຫຍ່ຜູ້ພິພາກສາ ທີ່ເຫັນວ່າບໍ່ຖືກຕ້ອງ ຕາມລັດຖະທຳມະນູນ ແລະ ກົດໝາຍ;

15. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນ ຕໍ່ກອງປະຊຸມສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ ໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມ;

16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 28 (ປັບປຸງ) ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ**

ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ມີໜ້າທີ່ຊ່ວຍວຽກຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໃນການປະຕິບັດໜ້າທີ່ ແລະ ຈະໄດ້ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ໃນກໍລະນີທີ່ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕິດຂັດ ແມ່ນ ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ທີ່ໄດ້ຮັບມອບໝາຍ ເປັນຜູ້ຮັກສາການແທນ.

**ມາດຕາ 29 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະກຳມະການໄອຍະການປະຊາຊົນສູງສຸດ**

ຄະນະກຳມະການໄອຍະການປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕົກລົງຮັບຮອງເອົາແຜນຍຸດທະສາດ ກ່ຽວກັບການພັດທະນາວຽກງານໄອຍະການ;

2. ຄົ້ນຄວ້າ ແລະ ໃຫ້ຄຳເຫັນ ຕໍ່ຮ່າງກົດໝາຍ ຂອງອົງການໄອຍະການປະຊາຊົນ;

3. ຄົ້ນຄວ້າ ແລະໃຫ້ຄຳເຫັນ ຕໍ່ຄຳຕັດສິນ ຫຼື ຄຳພິພາກສາ ປະຫານຊີວິດ ທີ່ໃຊ້ໄດ້ຢ່າງເດັດຂາດ;

4. ຄົ້ນຄວ້າ ແລະ ໃຫ້ຄຳເຫັນ ຕໍ່ຄະດີຂັ້ນຮື້ຟື້ນ ຕາມການສະເໜີ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ;

5. ຄົ້ນຄວ້າ ແລະ ໃຫ້ຄຳເຫັນ ຕໍ່ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າຫ້ອງການ, ບັນດາກົມ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ ຂອງອົງການໄອຍະການປະຊາຊົນສູງສຸດ, ຫົວໜ້າ ແລະ ຮອງຫົວໜ້າ ອົງການໄອຍະການປະຊາຊົນທ້ອງຖິ່ນ;

6. ຄົ້ນຄວ້າ ແລະ ໃຫ້ຄຳເຫັນ ຕໍ່ການສ້າງຕັ້ງ ຫຼື ຍຸບເລີກກົງຈັກ ຂອງອົງການໄອຍະການປະຊາຊົນສູງສຸດ;

7. ຄົ້ນຄວ້າ ແລະ ໃຫ້ຄຳເຫັນຕໍ່ແຜນການ, ແຜນງົບປະມານປະຈຳປີ ຂອງອົງການໄອຍະການປະຊາຊົນ;

8. ຄົ້ນຄວ້າ ແລະ ໃຫ້ຄຳເຫັນ ຕໍ່ວຽກງານອື່ນ ທີ່ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເຫັນວ່າມີຄວາມຈຳເປັນ.

**ມາດຕາ 30 (ໃໝ່) ສິດ ແລະ ໜ້າທີ່ ຂອງຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ**

ຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕົກລົງຮັບຮອງເອົາແຜນພັດທະນາວຽກງານໄອຍະການປະຊາຊົນ;
2. ຄົ້ນຄວ້າ ແລະ ໃຫ້ຄຳເຫັນ ຕໍ່ການສ້າງຕັ້ງ ຫຼື ຍຸບເລີກກົງຈັກ ຂອງອົງການໄອຍະການປະຊາຊົນ;
3. ຄົ້ນຄວ້າ ແລະ ໃຫ້ຄຳເຫັນ ຕໍ່ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າຫ້ອງການ, ບັນດາ ພະແນກ, ຂະແໜງ, ໜ່ວຍງານ ຂອງອົງການໄອຍະການປະຊາຊົນ;
4. ຄົ້ນຄວ້າ ແລະ ໃຫ້ຄຳເຫັນ ກ່ຽວກັບການນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ທີ່ມີຄວາມຫຍຸ້ງຍາກສັບສົນ ຕາມການສະເໜີ ຂອງຫົວໜ້າອົງການໄອຍະການປະຊາຊົນທ້ອງຖິ່ນ;
5. ຄົ້ນຄວ້າ ແລະ ໃຫ້ຄຳເຫັນ ຕໍ່ຄະດີທີ່ມີຄວາມຫຍຸ້ງຍາກສັບສົນ, ການກະທຳຜິດທີ່ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ຫຼື ປະຫານຊີວິດ ຕາມການສະເໜີ ຂອງຫົວໜ້າອົງການໄອຍະການປະຊາຊົນທ້ອງຖິ່ນ;
6. ຄົ້ນຄວ້າ ແລະ ໃຫ້ຄຳເຫັນ ຕໍ່ແຜນການ, ແຜນງົບປະມານປະຈຳປີ ຂອງອົງການໄອຍະການປະຊາຊົນ;
7. ຄົ້ນຄວ້າ ແລະ ໃຫ້ຄຳເຫັນ ຕໍ່ວຽກງານອື່ນ ທີ່ຫົວໜ້າອົງການໄອຍະການປະຊາຊົນ ເຫັນວ່າມີຄວາມຈຳເປັນ.

**ມາດຕາ 31 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫົວໜ້າອົງການໄອຍະການປະຊາຊົນພາກ**

ຫົວໜ້າອົງການໄອຍະການປະຊາຊົນພາກ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊີ້ນຳ ແລະ ນຳພາ ການຕິດຕາມກວດກາການປະຕິບັດກົດໝາຍ;
2. ຊີ້ນຳ, ນຳພາ ແລະ ກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານ ຂອງອົງການໄອຍະການປະຊາຊົນພາກ ແລະ ອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ;
3. ໃຫ້ຄຳແນະນຳທາງດ້ານກົດໝາຍ ແກ່ອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ;
4. ລົບລ້າງຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນຂັ້ນລຸ່ມ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
5. ຖະແຫຼງ ເປັນຂັ້ນອຸທອນ ແລະ ຂັ້ນລົບລ້າງ ຕໍ່ສານປະຊາຊົນພາກ;
6. ສະເໜີຄັດຄ້ານ ຄຳຕັດສິນຂອງສານຂັ້ນລຸ່ມ ແລະ ຄຳພິພາກສາຂອງສານຂັ້ນຂອງຕົນ;
7. ລາຍງານສະພາບການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນພາກ ຕໍ່ຫົວໜ້າອົງການໄອຍະການປະຊາຊົນສູງສຸດ;
8. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນພາກ ຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ທີ່ຕົນຕັ້ງຢູ່ໃນເວລາສະພາປະຊາຊົນຂັ້ນແຂວງ ບໍ່ໄດ້ເປີດກອງປະຊຸມ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 32 (ປັບປຸງ) ຮອງຫົວໜ້າອົງການໄອຍະການປະຊາຊົນພາກ**

ຮອງຫົວໜ້າອົງການໄອຍະການປະຊາຊົນພາກ ມີໜ້າທີ່ຊ່ວຍວຽກຫົວໜ້າອົງການໄອຍະການປະຊາຊົນພາກ ໃນການປະຕິບັດໜ້າທີ່ ແລະ ຈະໄດ້ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງຫົວໜ້າອົງການໄອຍະການປະຊາຊົນພາກ.

ໃນກໍລະນີທີ່ ຫົວໜ້າອົງການໄອຍະການປະຊາຊົນພາກ ຕິດຂັດ ແມ່ນ ຮອງຫົວໜ້າອົງການໄອຍະການປະຊາຊົນພາກ ທີ່ໄດ້ຮັບມອບໝາຍ ເປັນຜູ້ຮັກສາການແທນ.

**ມາດຕາ 33 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ**

ຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊີ້ນຳ ແລະ ນຳພາ ການຕິດຕາມກວດກາການປະຕິບັດກົດໝາຍ;

2. ຊີ້ນຳ, ນຳພາ ແລະ ກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານ ຂອງອົງການໄອຍະການປະຊາຊົນຂັ້ນຂອງຕົນ ແລະ ອົງການໄອຍະການປະຊາຊົນເຂດ;

3. ໃຫ້ຄຳແນະນຳທາງດ້ານກົດໝາຍ ແກ່ອົງການໄອຍະການປະຊາຊົນເຂດ;

4. ລຶບລ້າງຄຳສັ່ງ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຂອງຫົວໜ້າອົງການໄອຍະການປະຊາຊົນເຂດ;

5. ສັ່ງຟ້ອງຜູ້ຖືກຫາ ແລະ ຖະແຫຼງ ຕໍ່ສານປະຊາຊົນ ແຂວງ, ນະຄອນຫຼວງ ກ່ຽວກັບການກະທຳຜິດທີ່ບໍ່ຢູ່ໃນຂອບເຂດ ສິດ ແລະ ໜ້າທີ່ ການສັ່ງຟ້ອງ ຂອງຫົວໜ້າອົງການໄອຍະການປະຊາຊົນເຂດ; ຖະແຫຼງເປັນຂັ້ນອຸທອນ ຕໍ່ສານປະຊາຊົນ ແຂວງ, ນະຄອນຫຼວງ;

6. ຖະແຫຼງຕໍ່ສານປະຊາຊົນ ແຂວງ, ນະຄອນຫຼວງ ກ່ຽວກັບການປ່ອຍຕົວນັກໂທດກ່ອນກຳນົດ ໂດຍມີເງື່ອນໄຂ;

7. ສະເໜີຄັດຄ້ານ ຄຳຕັດສິນຂອງສານຂັ້ນລຸ່ມ, ຄຳຕັດສິນ ແລະ ຄຳພິພາກສາຂອງສານຂັ້ນຂອງຕົນ;

8. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ຫົວໜ້າອົງການໄອຍະການປະຊາຊົນພາກ ແລະ ອົງການໄອຍະການປະຊາຊົນສູງສຸດ;

9. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ ຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງທີ່ຕົນຕັ້ງຢູ່ ໃນເວລາສະພາປະຊາຊົນຂັ້ນແຂວງ ບໍ່ໄດ້ເປີດກອງປະຊຸມ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 34 (ປັບປຸງ) ຮອງຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ**

ຮອງຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ ມີໜ້າທີ່ຊ່ວຍວຽກຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ ໃນການປະຕິບັດໜ້າທີ່ ແລະ ຈະໄດ້ຮັບຜິດຊອບວຽກງານໃດໜຶ່ງສະເພາະຕາມການມອບໝາຍ ຂອງຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ.

ໃນກໍລະນີທີ່ ຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ ຕິດຂັດ ແມ່ນຮອງຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ ທີ່ໄດ້ຮັບມອບໝາຍ ເປັນຜູ້ຮັກສາການແທນ.

**ມາດຕາ 35 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫົວໜ້າອົງການໄອຍະການປະຊາຊົນເຂດ**

ຫົວໜ້າອົງການໄອຍະການປະຊາຊົນເຂດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊີ້ນຳ ແລະ ນຳພາ ການຕິດຕາມກວດກາການປະຕິບັດກົດໝາຍ;

2. ຊີ້ນຳ, ນຳພາ ແລະ ກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານ ຂອງອົງການໄອຍະການປະຊາຊົນ;

3. ສັ່ງຟ້ອງຜູ້ຖືກຫາ ແລະ ຖະແຫຼງ ຕໍ່ສານປະຊາຊົນ;

4. ສະເໜີ ຄັດຄ້ານ ຄຳຕັດສິນ ຂອງສານປະຊາຊົນ;

5. ລາຍງານ ສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ເມືອງ, ເທດສະບານ, ນະຄອນໃດ ຫາກໄດ້ສ້າງຕັ້ງອົງການໄອຍະການປະຊາຊົນຂຶ້ນ, ຫົວໜ້າອົງການໄອຍະການປະຊາຊົນດັ່ງກ່າວ ມີ ສິດ ແລະ ໜ້າທີ່ ຄືກັນກັບຫົວໜ້າອົງການໄອຍະການປະຊາຊົນເຂດ.

**ມາດຕາ 36 (ປັບປຸງ) ຮອງຫົວໜ້າອົງການໄອຍະການປະຊາຊົນເຂດ**

ຮອງຫົວໜ້າອົງການໄອຍະການປະຊາຊົນເຂດ ມີໜ້າທີ່ຊ່ວຍວຽກຫົວໜ້າອົງການໄອຍະການປະຊາຊົນເຂດ, ແລະ ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍ ຂອງຫົວໜ້າອົງການໄອຍະການປະຊາຊົນເຂດ.

ໃນເວລາທີ່ ຫົວໜ້າອົງການໄອຍະການປະຊາຊົນເຂດ ຕິດຂັດ ແມ່ນ ຮອງຫົວໜ້າອົງການໄອຍະການປະຊາຊົນເຂດ ທີ່ໄດ້ຮັບມອບໝາຍ ເປັນຜູ້ຮັກສາການແທນ.

**ມາດຕາ 37 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະນັກງານໄອຍະການປະຊາຊົນ**

ພະນັກງານໄອຍະການປະຊາຊົນ ມີ ສິດ ແລະ ໜ້າທີ່ ຕາມການມອບໝາຍ ຂອງຫົວໜ້າອົງການໄອຍະການປະຊາຊົນ ດັ່ງນີ້:

1. ດຳເນີນການສືບສວນ-ສອບສວນຄະດີ;
2. ເອົາຄຳໃຫ້ການຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ;
3. ເກັບກຳຂໍ້ມູນຫຼັກຖານ ກ່ຽວກັບຄະດີ;
4. ເຂົ້າຮ່ວມການດຳເນີນຄະດີກັບເຈົ້າໜ້າທີ່ສືບສວນ-ສອບສວນ;
5. ຄົ້ນຄວ້າ ສະຫຼຸບສຳນວນຄະດີ, ຮ່າງຄຳຖະແຫຼງ ຫຼື ຄຳຕິກລົງ ຂອງຫົວໜ້າອົງການໄອຍະການປະຊາຊົນ;
6. ເຂົ້າຮ່ວມປະຊຸມສານ;
7. ຕິດຕາມກວດກາການປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;
8. ຕິດຕາມກວດກາສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ;
9. ໄດ້ຮັບການບຳລຸງ ແລະ ຍົກລະດັບ ກ່ຽວກັບວຽກງານໄອຍະການ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 38 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຜູ້ຊ່ວຍພະນັກງານໄອຍະການປະຊາຊົນ**

ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ ມີ ສິດ ແລະ ໜ້າທີ່ ຕາມການມອບໝາຍຂອງພະນັກງານໄອຍະການປະຊາຊົນ ດັ່ງນີ້:

1. ເຂົ້າຮ່ວມ ແລະ ບັນທຶກເອົາຄຳໃຫ້ການ ຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ;
2. ຊ່ວຍຄົ້ນຄວ້າ, ສະຫຼຸບສຳນວນຄະດີ ແລະ ຮ່າງຄຳຖະແຫຼງ ຂອງຫົວໜ້າອົງການໄອຍະການປະຊາຊົນ;
3. ໃສ່ເລກທີຄະດີ, ຈັດສຳນວນຄະດີ ແລະ ເຮັດບັນຊີເອກະສານ, ເກັບມ້ຽນ ແລະ ເຮັດສະຖິຕິສຳນວນຄະດີ;
4. ເຮັດບັນຊີ ແລະ ຕິດຕາມການເກັບມ້ຽນຂອງກາງຄະດີ;
5. ເຮັດບັນຊີ ແລະ ສະຖິຕິ ຜູ້ຖືກຫາ, ຜູ້ຖືກດັດສ້າງ, ນັກໂທດ;
6. ເຮັດໝາຍຮຽກ, ໝາຍເຊີນ;
7. ໄດ້ຮັບການບຳລຸງ ແລະ ຍົກລະດັບ ວຽກງານໄອຍະການ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

# ພາກທີ III
# ການເຄື່ອນໄຫວຂອງ ອົງການໄອຍະການປະຊາຊົນ
## ໝວດທີ 1
## ການຕິດຕາມກວດກາທົ່ວໄປ

**ມາດຕາ 39 (ປັບປຸງ) ການຕິດຕາມກວດກາທົ່ວໄປ**

ການຕິດຕາມກວດກາທົ່ວໄປ ແມ່ນ ການຕິດຕາມກວດກາການປະຕິບັດກົດໝາຍ ຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ ແລະ ພົນລະເມືອງ ເພື່ອໃຫ້ຖືກຕ້ອງ ແລະ ເປັນເອກະພາບ, ສະກັດກັ້ນ ແລະ ຕ້ານອາຊະຍາກຳ, ຕິດຕາມກວດກາການອອກນິຕິກຳ ຂອງບັນດາອົງການຈັດຕັ້ງດັ່ງກ່າວ ເພື່ອໃຫ້ສອດຄ່ອງກັບກົດໝາຍ.

**ມາດຕາ 40 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາທົ່ວໄປ**

ໃນການຕິດຕາມກວດກາທົ່ວໄປ ອົງການໄອຍະການປະຊາຊົນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ກວດກາການປະຕິບັດກົດໝາຍ ຂອງອົງການລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ, ພະນັກງານລັດຖະກອນ, ພົນລະເມືອງ ແລະ ນິຕິກຳ ຂອງອົງການກ່ຽວຂ້ອງດັ່ງກ່າວ ໂດຍໜ້າທີ່ ຫຼື ຕາມຄຳສະເໜີ, ຄຳຮ້ອງຟ້ອງ ຂອງບຸກຄົນ ຫຼື ການຈັດຕັ້ງ. ຖ້າເຫັນວ່າມີການລະເມີດກົດໝາຍ ຕ້ອງສະເໜີໃຫ້ອົງການທີ່ກ່ຽວຂ້ອງແກ້ໄຂ. ໃນກໍລະນີທີ່ການລະເມີດນັ້ນ ຫາກເປັນການກະທຳຜິດທາງອາຍາ ຫົວໜ້າອົງການໄອຍະການປະຊາຊົນ ຕ້ອງນຳມາດຳເນີນຄະດີຕາມກົດໝາຍ;

2. ທວງເອົານິຕິກຳ ແລະ ເຊີນບຸກຄົນ ຫຼື ຜູ້ຕາງໜ້າການຈັດຕັ້ງທີ່ກ່ຽວຂ້ອງ ມາອະທິບາຍ ກ່ຽວກັບການລະເມີດກົດໝາຍ;

3. ສະເໜີ ໂຈະ ຫຼື ລົບລ້າງນິຕິກຳ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ ທີ່ບໍ່ສອດຄ່ອງກັບກົດໝາຍ ຕໍ່ອົງການຈັດຕັ້ງດັ່ງກ່າວ ຫຼື ຕໍ່ອົງການຈັດຕັ້ງຂັ້ນເທິງທີ່ກ່ຽວຂ້ອງ;

4. ເກັບກຳສະຖິຕິອາຊະຍາກຳ, ຄົ້ນຄວ້າ, ວິເຄາະ, ວິໄຈ ສາເຫດທີ່ພາໃຫ້ເກີດອາຊະຍາກຳ, ວາງມາດຕະການຕ້ານ ແລະ ສະກັດກັ້ນອາຊະຍາກຳ;

5. ສະເໜີ ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ວິສາຫະກິດ ກ່ຽວກັບການຈຳກັດ ແລະ ລົບລ້າງ ການລະເມີດກົດໝາຍ, ສາເຫດ ແລະ ເງື່ອນໄຂ ທີ່ພາໃຫ້ການກະທຳຜິດເກີດຂຶ້ນ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 41 (ປັບປຸງ) ຜົນບັງຄັບປະຕິບັດນິຕິກຳ ຂອງອົງການໄອຍະການປະຊາຊົນຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ**

ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ຂອງອົງການໄອຍະການປະຊາຊົນທຸກຂັ້ນ ທີ່ວາງອອກໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນ ມີຜົນບັງຄັບປະຕິບັດ ສຳລັບທຸກອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ, ພະນັກງານ-ລັດຖະກອນ ແລະ ພົນລະເມືອງ.

ຄຳສະເໜີ ຂອງອົງການໄອຍະການປະຊາຊົນ ທີ່ລະເມີດກົດໝາຍ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງໄດ້ຮັບການພິຈາລະນາ ແລະ ແກ້ໄຂຢ່າງຊ້າບໍ່ໃຫ້ເກີນ ສິບຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີ ເປັນ

ຕົ້ນໄປ, ຖ້າເກີນກຳນົດເວລາດັ່ງກ່າວແລ້ວ ອົງການໄອຍະການປະຊາຊົນ ຕ້ອງສະເໜີຕໍ່ຂັ້ນເທິງ ຫຼື ການຈັດຕັ້ງ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງ ເພື່ອພິຈາລະນາ ແລະ ແກ້ໄຂ.

## ໝວດທີ 2
## ການຕິດຕາມກວດກາ
## ການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ

**ມາດຕາ 42 (ປັບປຸງ) ການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ**

ການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ ແມ່ນ ການຕິດຕາມກວດກາ ການປະຕິບັດກົດໝາຍ ໃນຂັ້ນຕອນການສືບສວນ-ສອບສວນ ໃຫ້ຖືກຕ້ອງ, ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ເພື່ອ:

1. ຊອກໃຫ້ເຫັນການປະຕິບັດລະບຽບ, ກົດໝາຍ ຂອງອົງການສືບສວນ-ສອບສວນ ມີຄວາມຖືກຕ້ອງ ຫຼື ມີການລະເມີດກົດໝາຍ;

2. ຊອກຮູ້ ການນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ເຊັ່ນ ການກວດຄົ້ນ ເຄຫະສະຖານ, ການກັກຕົວ, ການຈັບຕົວ, ການກັກຂັງພາງ, ການປ່ອຍຕົວພາງຜູ້ຖືກຫາ ໄດ້ປະຕິບັດຖືກຕ້ອງຕາມ ກົດໝາຍ ຫຼື ມີການລະເມີດກົດໝາຍ;

3. ໃຫ້ອົງການສືບສວນ-ສອບສວນປະຕິບັດກົດໝາຍ ກ່ຽວກັບການດຳເນີນຄະດີອາຍາ ຢ່າງເຂັ້ມງວດ;

4. ໃຫ້ການອອກ ຫຼື ບໍ່ອອກ ຄຳສັ່ງເປີດການສືບສວນ-ສອບສວນ ຂອງຫົວໜ້າອົງການສືບສວນ-ສອບ ສວນ ມີ ຫຼື ບໍ່ມີ ຫຼັກຖານໜັກແໜ້ນ ແລະ ຖືກຕ້ອງຕາມກົດໝາຍ;

5. ຄົ້ນຄວ້າ, ຊອກໃຫ້ເຫັນທຸກການກະທຳຜິດທີ່ເກີດຂຶ້ນ ແລະ ບໍ່ໃຫ້ຜູ້ກະທຳຜິດພົ້ນຈາກການລົງໂທດ ຕາມກົດໝາຍ;

6. ຊອກໃຫ້ເຫັນ ສາເຫດ ແລະ ເງື່ອນໄຂ ຂອງການກະທຳຜິດ ເພື່ອວາງມາດຕະການແກ້ໄຂ.

**ມາດຕາ 43 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ**

ໃນການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ ອົງການໄອຍະການປະຊາ ຊົນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ທວງເອົາສຳນວນຄະດີອາຍາ, ເອກະສານ, ຂອງກາງ ແລະ ຂໍ້ມູນຕ່າງໆ ກ່ຽວກັບການກະທຳຜິດຈາກ ອົງການສືບສວນ-ສອບສວນ;

2. ເຂົ້າຮ່ວມການສືບສວນ-ສອບສວນຄະດີອາຍາ ຫຼື ຈະດຳເນີນການສືບສວນ-ສອບສວນ ດ້ວຍຕົນເອງກໍ ໄດ້ ໃນກໍລະນີທີ່ຈຳເປັນ;

3. ລົບລ້າງຄຳສັ່ງ ຂອງອົງການສືບສວນ-ສອບສວນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຫຼື ບໍ່ມີເຫດຜົນ;

4. ໃຫ້ຄຳແນະນຳ ເປັນລາຍລັກອັກສອນ ກ່ຽວກັບການປະຕິບັດວິທີການສືບສວນ-ສອບສວນ, ມາດຕະ ການສະກັດກັ້ນ ແລະ ການຊອກຫາຜູ້ກະທຳຜິດ, ການຈຳແນກການກະທຳຜິດ;

5. ອອກຄຳສັ່ງຕ່າງໆ ເປັນຕົ້ນ ຄຳສັ່ງກັກຕົວຜູ້ຖືກສົງໄສ, ຄຳສັ່ງຈັບຕົວ, ກັກຂັງພາງ, ປ່ອຍຕົວພາງຜູ້ຖືກ ຫາ, ກວດຄົ້ນເຄຫະສະຖານ ກ່ຽວກັບການກະທຳຜິດ ທີ່ບໍ່ເຊິ່ງໜ້າ ຫຼື ໃນກໍລະນີທີ່ບໍ່ຮີບດ່ວນ;

6. ຕໍ່ກຳນົດເວລາສືບສວນ-ສອບສວນ ແລະ ກຳນົດເວລາກັກຂັງພາງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

7. ສົ່ງສຳນວນຄະດີຄືນໃຫ້ອົງການສືບສວນ-ສອບສວນ ພ້ອມດ້ວຍຄຳແນະນຳ ກ່ຽວກັບການສືບສວນ-ສອບສວນເພີ່ມເຕີມ;

8. ອອກຄຳສັ່ງໃຫ້ ຫົວໜ້າອົງການສືບສວນ-ສອບສວນ ເພື່ອສັ່ງໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ ທີ່ໄດ້ລະເມີດກົດໝາຍໃນການດຳເນີນຄະດີ ຢຸດເຊົາການສືບສວນ-ສອບສວນ;

9. ອອກຄຳສັ່ງ ເປີດການສືບສວນ-ສອບສວນ, ຊັດມ້ຽນຄະດີ ຫຼື ໂຈະການດຳເນີນຄະດີ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 44 (ປັບປຸງ) ຜົນບັງຄັບໃນການປະຕິບັດນິຕິກຳຂອງອົງການໄອຍະການປະຊາຊົນຕໍ່ອົງການສືບສວນ-ສອບສວນ**

ທຸກຄຳສັ່ງ ແລະ ຄຳແນະນຳຂອງຫົວໜ້າອົງການໄອຍະການປະຊາຊົນ ມີຜົນບັງຄັບປະຕິບັດສຳລັບອົງການສືບສວນ-ສອບສວນ.

## ໝວດທີ 3
## ການສັ່ງຟ້ອງຂຶ້ນສານ

**ມາດຕາ 45 (ປັບປຸງ) ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ**

ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແມ່ນ ການອອກຄຳສັ່ງຂອງຫົວໜ້າອົງການໄອຍະການປະຊາຊົນ ຊຶ່ງຕັ້ງຂໍ້ກ່າວຫາໃສ່ຜູ້ຖືກຫາ ພ້ອມທັງສົ່ງສຳນວນຄະດີ, ຜູ້ຖືກຫາ ແລະ ຂອງກາງ ໃຫ້ສານພິຈາລະນາຕັດສີນ ຕາມກົດໝາຍ.

ມີແຕ່ ອົງການໄອຍະການປະຊາຊົນເທົ່ານັ້ນ ມີສິດ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ.

ອົງການໄອຍະການປະຊາຊົນ ເປັນຜູ້ຕາງໜ້າລັດ ແລະ ເປັນໂຈດ ໃນຄະດີອາຍາ.

ສຳລັບຂັ້ນຕອນການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ມາດຕາ 46 (ປັບປຸງ) ການສັ່ງຟ້ອງ ແລະ ການຖະແຫຼງຕໍ່ສານ**

ກ່ອນຈະທຳການສັ່ງຟ້ອງຜູ້ຖືກຫາ ແລະ ຖະແຫຼງຕໍ່ສານນັ້ນ ອົງການໄອຍະການປະຊາຊົນ ຕ້ອງຄົ້ນຄວ້າສຳນວນຄະດີຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ, ຮັບປະກັນໃຫ້ມີຫຼັກຖານຮັດກຸມ ແລະ ໜັກແໜ້ນ ເພື່ອຢັ້ງຢືນຄຳສັ່ງຟ້ອງ ແລະ ຄຳຖະແຫຼງຂອງຕົນ ຕໍ່ສານປະຊາຊົນ.

ອົງການໄອຍະການປະຊາຊົນ ອາດດຳເນີນການສັ່ງຟ້ອງຜູ້ຖືກຫາຂຶ້ນສານໂດຍກົງ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ຄຳສັ່ງຟ້ອງຂອງອົງການໄອຍະການປະຊາຊົນ ຕ້ອງແຈ້ງໃຫ້ຜູ້ຖືກຫາຊາບ ຢ່າງໜ້ອຍພາຍໃນກຳນົດເວລາສາມວັນ ລັດຖະການ ກ່ອນສົ່ງສຳນວນຄະດີໃຫ້ສານປະຊາຊົນ ພິຈາລະນາ.

## ໝວດທີ 4
## ການຕິດຕາມກວດກາ
## ການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ

**ມາດຕາ 47 (ປັບປຸງ) ການຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີຢູ່ສານ**

ອົງການໄອຍະການປະຊາຊົນ ຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີຢູ່ສານໃຫ້ດຳເນີນຢ່າງຮອບດ້ານ, ຄົບຖ້ວນ, ພາວະວິໄສ ແລະ ຖືກຕ້ອງຕາມຂັ້ນຕອນການດຳເນີນຄະດີຢູ່ສານ ເພື່ອໃຫ້ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານຖືກຕ້ອງ ແລະ ຍຸຕິທຳ.

**ມາດຕາ 48 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີອາຍາຢູ່ສານ**

ການຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີອາຍາຢູ່ສານ ອົງການໄອຍະການປະຊາຊົນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຂົ້າຮ່ວມໃນການດຳເນີນຄະດີອາຍາ ຢູ່ທີ່ປະຊຸມສານຂັ້ນຂອງຕົນ ເພື່ອກ່າວຟ້ອງ ແລະ ຖະແຫຼງຕໍ່ສານ, ກວດກາການໄຕ່ສວນຄະດີໃນທີ່ປະຊຸມສານ ໃຫ້ດຳເນີນໄປຢ່າງຖືກຕ້ອງຕາມກົດໝາຍ;
2. ກວດກາ ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ຖືກຕ້ອງ ຫຼື ບໍ່ຖືກຕ້ອງ ຕາມການສັ່ງຟ້ອງຂອງຕົນ ລວມທັງການວາງໂທດ ແລະ ການນຳໃຊ້ມາດຕາກົດໝາຍໃສ່ການກະທຳຜິດນັ້ນ;
3. ສະເໜີຄັດຄ້ານ ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາຄະດີອາຍາ ທີ່ຍັງບໍ່ທັນໃຊ້ໄດ້ຢ່າງເດັດຂາດ ຂອງສານປະຊາຊົນຂັ້ນລຸ່ມ ແລະ ຂັ້ນຂອງຕົນ ທີ່ເຫັນວ່າ ບໍ່ມີເຫດຜົນໜັກແໜ້ນ ຫຼື ບໍ່ຖືກຕ້ອງຕາມກົດໝາຍ;
4. ຖອນຄຳສະເໜີຄັດຄ້ານຂອງຕົນ ກ່ອນສານຕັດສິນ;
5. ສະເໜີຮື້ຟື້ນຄະດີຕາມກົດໝາຍ ໃນກໍລະນີທີ່ໄດ້ພົບເຫັນຫຼັກຖານໃໝ່;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 49 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ ແລະ ຄະດີອື່ນ**

ເພື່ອປົກປ້ອງຜົນປະໂຫຍດຂອງລັດ ແລະ ສັງຄົມ ຫຼື ຂອງບຸກຄົນ ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ໃນການດຳເນີນຄະດີ ແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ ແລະ ຄະດີອື່ນ ອົງການໄອຍະການປະຊາຊົນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

ໃນກໍລະນີທີ່ ບໍ່ມີຜູ້ຮ້ອງຟ້ອງ:

1. ເປັນໂຈດທາງແພ່ງ;
2. ປະກອບຫຼັກຖານໃນຄະດີ ແລະ ທຳການຮ້ອງຟ້ອງ ຕໍ່ສານປະຊາຊົນ;
3. ເຮັດຄຳຖະແຫຼງເປັນລາຍລັກອັກສອນ ຕໍ່ສານປະຊາຊົນ;
4. ເຂົ້າຮ່ວມປະຊຸມສານຂັ້ນຂອງຕົນ ເພື່ອຖະແຫຼງ.

ໃນກໍລະນີທີ່ ມີຜູ້ຮ້ອງຟ້ອງ ຫຼື ໂຈດທາງແພ່ງ:

1. ຄົ້ນຄວ້າສຳນວນຄະດີ ແລະ ຖະແຫຼງ ເປັນລາຍລັກອັກສອນ ຕໍ່ສານປະຊາຊົນ;
2. ເຂົ້າຮ່ວມປະຊຸມສານຂັ້ນຂອງຕົນ ເພື່ອຖະແຫຼງ;
3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 50 (ປັບປຸງ) ການຕິດຕາມກວດກາການດໍາເນີນຄະດີ ແພ່ງ, ການຄ້າ, ຄອບຄົວ, ແຮງງານ ແລະ ຄະດີອື່ນ**

ການຕິດຕາມກວດກາ ການປະຕິບັດກົດໝາຍຂອງສານ ໃນການດໍາເນີນຄະດີ ແພ່ງ, ການຄ້າ, ຄອບຄົວ, ແຮງງານ ແລະ ຄະດີອື່ນ ອົງການໄອຍະການປະຊາຊົນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ບົດສະຫຼຸບ ຫຼື ສໍານວນຄະດີ ທີ່ສານປະຊາຊົນ ສົ່ງໃຫ້;
2. ເຮັດຄໍາຖະແຫຼງ ເປັນລາຍລັກອັກສອນ ແລະ ເຂົ້າຮ່ວມປະຊຸມສານຂັ້ນຂອງຕົນ ເພື່ອຖະແຫຼງ;
3. ເຂົ້າຮ່ວມປະຊຸມສານຂັ້ນຂອງຕົນ ເພື່ອຖະແຫຼງ ແລະ ມອບຄໍາຖະແຫຼງໃຫ້ສານ;
4. ສະເໜີຄັດຄ້ານ ຄໍາຊີ້ຂາດ, ຄໍາຕັດສິນ, ຄໍາພິພາກສາ ຄະດີແພ່ງ, ການຄ້າ, ຄອບຄົວ, ແຮງງານ ແລະ ຄະດີອື່ນ ທີ່ຍັງບໍ່ທັນໃຊ້ໄດ້ຢ່າງເດັດຂາດ ຂອງສານປະຊາຊົນຂັ້ນລຸ່ມ ແລະ ຂັ້ນຂອງຕົນ ທີ່ເຫັນວ່າບໍ່ມີເຫດຜົນໜັກແໜ້ນ ຫຼື ບໍ່ຖືກຕ້ອງ ຕາມກົດໝາຍ;
5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ໝວດທີ 5
## ການຕິດຕາມກວດກາການປະຕິບັດຄໍາຕັດສິນຂອງສານ

**ມາດຕາ 51 (ປັບປຸງ) ການຕິດຕາມກວດກາການປະຕິບັດຄໍາຕັດສິນຂອງສານ**

ການຕິດຕາມກວດກາການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ແມ່ນ ການຕິດຕາມກວດກາການຈັດຕັ້ງປະຕິບັດຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ຫຼື ຄໍາພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 52 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດຄໍາຕັດສິນຂອງສານ**

ໃນການຕິດຕາມກວດກາການປະຕິບັດຄໍາຕັດສິນຂອງສານ ອົງການໄອຍະການປະຊາຊົນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໄດ້ຮັບສໍາເນົາຄໍາສັ່ງ ໃຫ້ປະຕິບັດຄໍາຕັດສິນ ຫຼື ຄໍາພິພາກສາຂອງສານ;
2. ສະເໜີ ໃຫ້ພະນັກງານປະຕິບັດຄໍາຕັດສິນຂອງສານ:
   - ລາຍງານສະພາບການປະຕິບັດ ຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ຫຼື ຄໍາພິພາກສາຂອງສານ;
   - ປະຕິບັດ ຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ຫຼື ຄໍາພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຊຶ່ງຍັງບໍ່ທັນໄດ້ຮັບການປະຕິບັດ;
3. ກວດກາຄວາມຖືກຕ້ອງຂອງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ເປັນຕົ້ນ ການປະຕິບັດກົດໝາຍ, ການຊໍາລະທາງແພ່ງ, ການເກັບ ແລະ ການມອບຄ່າທໍານຽມສານ, ຄ່າອາກອນ ແລະ ຄ່າປັບໃໝເຂົ້າງົບປະມານ, ການຮິບຊັບ ແລະ ການຮິບວັດຖຸສິ່ງຂອງ ເຂົ້າເປັນຂອງລັດ, ການປະຕິບັດໂທດທາງອາຍາ;
4. ສະເໜີ ປ່ຽນແປງ, ລຶບລ້າງ ຫຼື ໂຈະ ການປະຕິບັດທີ່ບໍ່ຖືກຕ້ອງ ຕາມຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ຫຼື ຄໍາພິພາກສາຂອງສານ.

ທຸກຄໍາສະເໜີ ຂອງອົງການໄອຍະການປະຊາຊົນ ພະນັກງານປະຕິບັດຄໍາຕັດສິນຂອງສານ ຕ້ອງຈັດຕັ້ງປະຕິບັດພາຍໃນ ສາມສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຄໍາສະເໜີ ເປັນຕົ້ນໄປ.

## ໝວດທີ 6
## ການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ

**ມາດຕາ 53 (ປັບປຸງ) ການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ**

ການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານ ແມ່ນເພື່ອໃຫ້ປະຕິບັດຖືກຕ້ອງຕາມກົດໝາຍ, ລະບຽບການ ແລະ ເງື່ອນໄຂຂອງການກັກຕົວ, ການກັກຂັງ, ການດັດສ້າງ, ການປະຕິບັດໂທດຕັດອິດສະລະພາບ ແລະ ມາດຕະການບັງຄັບອື່ນຂອງສານ.

**ມາດຕາ 54 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາ ການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ**

ໃນການຕິດຕາມກວດກາ ການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ອົງການໄອຍະການປະຊາຊົນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊອກຮູ້ການກັກຕົວ, ການກັກຂັງ, ການຍົກຍ້າຍ, ການອອກໄປປິ່ນປົວ ແລະ ການປ່ອຍຕົວ ຜູ້ຖືກສົງໄສ, ຜູ້ຖືກຫາ, ຈຳເລີຍ, ຜູ້ຖືກດັດສ້າງ ຫຼື ນັກໂທດ ປະຕິບັດຖືກຕ້ອງ ຫຼື ບໍ່ຖືກຕ້ອງ ຕາມທີ່ກົດໝາຍໄດ້ກຳນົດໄວ້ ເພື່ອວາງມາດຕະການແກ້ໄຂໃຫ້ທັນການ;

2. ລົງກວດກາ ສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານ ຢ່າງເປັນລະບົບ ຫຼື ໃນເວລາໃດກໍໄດ້ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

3. ກວດກາເອກະສານ ກ່ຽວກັບການກັກຕົວ, ການຈັບຕົວ, ການກັກຂັງ, ການປ່ອຍຕົວ, ການດັດສ້າງ ແລະ ການປະຕິບັດມາດຕະການບັງຄັບອື່ນຂອງສານ;

4. ກວດກາການຄຸ້ມຄອງ ຜູ້ຖືກ ກັກຕົວ, ກັກຂັງ, ດັດສ້າງ ແລະ ປະຕິບັດມາດຕະການບັງຄັບອື່ນຂອງສານ ພ້ອມທັງສອບຖາມບຸກຄົນດັ່ງກ່າວ;

5. ກວດກາພຶດຕິກຳຂອງເຈົ້າໜ້າທີ່ຕໍ່ບຸກຄົນທີ່ຖືກ ກັກຕົວ, ຈັບຕົວ, ກັກຂັງ, ດັດສ້າງ ແລະ ປະຕິບັດມາດຕະການບັງຄັບອື່ນຂອງສານ. ໃນກໍລະນີທີ່ພົບເຫັນພຶດຕິກຳຂອງເຈົ້າໜ້າທີ່ ເປັນການລະເມີດກົດໝາຍ ແລະ ລະບຽບການ ຕ້ອງຕັກເຕືອນ. ຖ້າພຶດຕິກຳຫາກເປັນການກະທຳຜິດທາງອາຍາ ກໍຕ້ອງດຳເນີນຄະດີຕາມກົດໝາຍ;

6. ສັ່ງໃຫ້ປ່ອຍຕົວໃນທັນໃດ ບຸກຄົນທີ່ຖືກ ກັກຕົວ, ຈັບຕົວ, ກັກຂັງ, ດັດສ້າງ ຫຼື ຖືກປະຕິບັດມາດຕະການບັງຄັບອື່ນຂອງສານ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

7. ເຂົ້າຮ່ວມ, ຄົ້ນຄວ້າ, ພິຈາລະນາ, ຄັດເລືອກ, ຈັດແບ່ງປະເພດ ແລະ ເຮັດບັນຊີນັກໂທດ ທີ່ມີເງື່ອນໄຂ ໄດ້ຮັບການອະໄພຍະໂທດ ແລະ ກວດກາການຈັດຕັ້ງປະຕິບັດການໃຫ້ອະໄພຍະໂທດ ຕາມລັດຖະດຳລັດຂອງປະທານປະເທດ;

8. ກວດບັນຊີລາຍຊື່ ຜູ້ຖືກຫາ, ຈຳເລີຍ, ຜູ້ຖືກດັດສ້າງ ຫຼື ນັກໂທດ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ, ຜູ້ທີ່ໄດ້ຮັບອະນຸຍາດໄປປິ່ນປົວ ຫຼື ນັກໂທດ ທີ່ໄດ້ຮັບອະນຸຍາດໃຫ້ຍົກຍ້າຍຈາກບ່ອນໜຶ່ງ ໄປປະຕິບັດໂທດ ຢູ່ບ່ອນອື່ນ;

9. ກວດກາຄຳສັ່ງ ແລະ ລະບຽບການຕ່າງໆ ຂອງຫົວໜ້າຮັບຜິດຊອບສະຖານທີ່ກັກຕົວ, ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ເພື່ອໃຫ້ສອດຄ່ອງກັບກົດໝາຍ ແລະ ໃຫ້ຫົວໜ້າຮັບຜິດຊອບດັ່ງກ່າວ ອະທິບາຍເຫດຜົນຂອງການລະເມີດກົດໝາຍ.

ຫົວໜ້າຮັບຜິດຊອບສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ຕ້ອງປະຕິບັດຕາມຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນ ກ່ຽວກັບການເຄົາລົບລະບຽບການ ການກັກຕົວ, ການກັກຂັງ, ການດັດສ້າງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 55 (ປັບປຸງ) ຄວາມຮັບຜິດຊອບໃນການສົ່ງຄຳຮ້ອງຟ້ອງ, ຄຳສະເໜີ ຂອງຜູ້ຖືກຫາ, ຈຳເລີຍ, ຜູ້ຖືກດັດສ້າງ ແລະ ນັກໂທດ**

ຄະນະຮັບຜິດຊອບ ສະຖານທີ່ກັກຂັງ, ສູນດັດສ້າງ ແລະ ຄ້າຍດັດສ້າງ ຕ້ອງສົ່ງຄຳຮ້ອງຟ້ອງ, ຄຳສະເໜີ ຂອງຜູ້ຖືກຫາ, ຈຳເລີຍ, ຜູ້ຖືກດັດສ້າງ ແລະ ນັກໂທດ ໃຫ້ອົງການໄອຍະການປະຊາຊົນ ພາຍໃນ ສີ່ສິບແປດຊົ່ວໂມງ ນັບແຕ່ເວລາທີ່ໄດ້ຮັບເປັນຕົ້ນໄປ.

## ພາກທີ IV
## ລະບອບວິທີເຮັດວຽກ

**ມາດຕາ 56 (ປັບປຸງ) ລະບອບເຮັດວຽກ**

ອົງການໄອຍະການປະຊາຊົນທຸກຂັ້ນ ປະກອບເປັນລະບົບອົງການໄອຍະການປະຊາຊົນ ເອກະພາບ ແລະ ລວມສູນ, ນຳພາໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນຂັ້ນລຸ່ມ ຂຶ້ນກັບຫົວໜ້າອົງການໄອຍະການປະຊາຊົນຂັ້ນເທິງ. ໃນເວລາປະຕິບັດໜ້າທີ່ຂອງຕົນນັ້ນ ຫົວໜ້າອົງການໄອຍະການປະຊາຊົນຂັ້ນລຸ່ມ ປະຕິບັດຕາມກົດໝາຍ ແລະ ຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ອົງການໄອຍະການປະຊາຊົນ ປະຕິບັດໜ້າທີ່ວຽກງານບົນພື້ນຖານຫຼັກການນິຕິທຳ ໂດຍສອດຄ່ອງກັບກົດໝາຍ, ຮັບປະກັນການປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ.

**ມາດຕາ 57 (ປັບປຸງ) ວິທີເຮັດວຽກ**

ອົງການໄອຍະການປະຊາຊົນ ປະຕິບັດໜ້າທີ່ວຽກງານ ໂດຍມີແຜນການ, ແບ່ງງານ ແລະ ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນ, ມີການກວດກາ, ສະຫຼຸບ, ຖອດຖອນບົດຮຽນ ແລະ ລາຍງານ, ຂໍຄຳເຫັນຊີ້ນຳຈາກຂັ້ນເທິງຂອງຕົນ, ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

## ພາກທີ V
## ຂໍ້ຫ້າມ

**ມາດຕາ 58 (ປັບປຸງ) ຂໍ້ຫ້າມສຳລັບພະນັກງານອົງການໄອຍະການປະຊາຊົນ**

ຫ້າມ ພະນັກງານອົງການໄອຍະການປະຊາຊົນ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຕຳແໜ່ງ, ໜ້າທີ່, ສິດອຳນາດ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ຍາດພີ່ນ້ອງ;
2. ປະຕິບັດສິດ, ໜ້າທີ່ ເກີນຂອບເຂດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

3. ບັງຄັບ ແລະ ນາບຂູ່ ຜູ້ຖືກຫາ, ຈໍາເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ;

4. ເມີນເສີຍຕໍ່ໜ້າທີ່, ບິດເບືອນຄວາມຈິງ, ປິດບັງ ຫຼື ປົກປ້ອງ ຜູ້ຖືກຫາ, ຈໍາເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ;

5. ກັກສໍານວນຄະດີ, ກົດໜ່ວງເອກະສານ ເພື່ອຫາຜົນປະໂຫຍດຈາກການດໍາເນີນຄະດີ;

6. ທວງ, ຮຽກ, ຮັບ, ເອົາສິນບົນ ຈາກຄູ່ຄວາມ, ບຸກຄົນ ແລະ ການຈັດຕັ້ງ;

7. ພົວພັນກັບ ຜູ້ຖືກຫາ, ຈໍາເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ ເພື່ອຫາຜົນປະໂຫຍດ;

8. ປິດບັງ, ຊຸກເຊື່ອງ ເອກະສານ, ຫຼັກຖານ ທີ່ມີຢູ່ໃນສໍານວນຄະດີ, ນໍາໃຊ້, ເຮັດໃຫ້ເປ່ເພເສຍຫາຍ ຂອງກາງໃນຄະດີ;

9. ເປີດເຜີຍຄວາມລັບທາງລັດຖະການ;

10. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 59 (ປັບປຸງ) ຂໍ້ຫ້າມ ສໍາລັບຜູ້ເຂົ້າຮ່ວມໃນການດໍາເນີນຄະດີ**

ຫ້າມຜູ້ເຂົ້າຮ່ວມໃນການດໍາເນີນຄະດີ ມີພຶດຕິກໍາ ດັ່ງນີ້:

1. ຂັດຂວາງ, ສ້າງຄວາມຫຍຸ້ງຍາກ, ນາບຂູ່ ພະນັກງານ-ລັດຖະກອນອົງການໄອຍະການປະຊາຊົນ, ຜູ້ສະໜອງຂໍ້ມູນຫຼັກຖານ ໃຫ້ແກ່ການດໍາເນີນຄະດີ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງ;

2. ລາຍງານ, ສະໜອງຂໍ້ມູນຫຼັກຖານ ບໍ່ຖືກກັບຄວາມຈິງ, ຊຸກເຊື່ອງ, ທໍາລາຍເອກະສານ, ວັດຖຸສິ່ງຂອງ ທີ່ເປັນຫຼັກຖານໃນຄະດີ;

3. ປະຕິເສດການສະໜອງຂໍ້ມູນຫຼັກຖານ ກ່ຽວກັບຄະດີ;

4. ໃຫ້ສິນບົນ ພະນັກງານ-ລັດຖະກອນອົງການໄອຍະການປະຊາຊົນ, ພະຍານ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງ;

5. ໝິ່ນປະໝາດ, ໃສ່ຮ້າຍ ພະນັກງານ-ລັດຖະກອນອົງການໄອຍະການປະຊາຊົນ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 60 (ປັບປຸງ) ຂໍ້ຫ້າມ ສໍາລັບບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກໍາ ດັ່ງນີ້:

1. ແຊກແຊງ, ກ້າວກ່າຍ ແລະ ຂັດຂວາງ ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນອົງການໄອຍະການປະຊາຊົນ;

2. ປົກປິດ, ເຊື່ອງອໍາ ຫຼື ທໍາລາຍ ຂໍ້ມູນ, ຫຼັກຖານ ກ່ຽວກັບຄະດີ;

3. ນາບຂູ່ ຫຼື ທໍາຮ້າຍ ພະນັກງານ-ລັດຖະກອນອົງການໄອຍະການປະຊາຊົນ, ພະຍານ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງກັບຄະດີ;

4. ປົກປ້ອງ, ຊຸກເຊື່ອງ ຜູ້ຖືກສົງໄສ, ຜູ້ຖືກຫາ, ຈໍາເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ;

5. ໃຫ້ສິນບົນ ພະນັກງານ-ລັດຖະກອນອົງການໄອຍະການປະຊາຊົນ;

6. ໝິ່ນປະໝາດ,ໃສ່ຮ້າຍພະນັກງານ-ລັດຖະກອນອົງການໄອຍະການປະຊາຊົນ;

7. ກັກຕົວ, ຈັບຕົວ, ກັກຂັງ, ກວດຄົ້ນເຄຫະສະຖານ ໂດຍບໍ່ມີຄໍາສັ່ງ ຂອງອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ;

8. ນໍາໃຊ້, ເຮັດໃຫ້ເປ່ເພເສຍຫາຍ ຂອງກາງໃນຄະດີ;

9. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VI
## ການຕິດຕາມກວດກາອົງການໄອຍະການປະຊາຊົນ

**ມາດຕາ 61 (ປັບປຸງ) ປະເພດການຕິດຕາມກວດກາ**

ການຕິດຕາມກວດກາອົງການໄອຍະການປະຊາຊົນ ມີ ສອງປະເພດ ດັ່ງນີ້:

1. ການຕິດຕາມກວດກາພາຍໃນ ໂດຍອົງການໄອຍະການປະຊາຊົນຂັ້ນເທິງ ເປັນຜູ້ຕິດຕາມກວດກາ ອົງການໄອຍະການປະຊາຊົນຂັ້ນລຸ່ມ ຕາມກົດໝາຍ;
2. ການຕິດຕາມກວດກາພາຍນອກ ໂດຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຕາມກົດໝາຍ.

**ມາດຕາ 62 (ປັບປຸງ) ເນື້ອໃນການຕິດຕາມກວດກາ**

ການຕິດຕາມກວດກາອົງການໄອຍະການປະຊາຊົນ ມີ ເນື້ອໃນ ດັ່ງນີ້:

1. ກວດກາການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ;
2. ກວດກາການປະຕິບັດກົດໝາຍ ຂອງອົງການໄອຍະການປະຊາຊົນ ເປັນຕົ້ນ ການນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ;
3. ກວດກາການອຳນວຍຄວບຄຸມ, ການຄຸ້ມຄອງ ທາງດ້ານການຈັດຕັ້ງ ແລະ ບຸກຄະລາກອນ;
4. ກວດກາການປະຕິບັດນະໂຍບາຍ ແລະ ມາດຕະການ ຕໍ່ພະນັກງານ-ລັດຖະກອນອົງການໄອຍະການປະຊາຊົນ.

**ມາດຕາ 63 (ປັບປຸງ) ຮູບການການຕິດຕາມກວດກາ**

ການຕິດຕາມກວດກາອົງການໄອຍະການປະຊາຊົນ ດຳເນີນຕາມແຜນການປົກກະຕິ, ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແລະ ແບບກະທັນຫັນ.

## ພາກທີ VII
## ວັນສ້າງຕັ້ງ, ຕາປະທັບ, ກາໝາຍ, ເຄື່ອງໝາຍ, ເຄື່ອງແບບ, ບັດປະຈຳການ ແລະ ງົບປະມານ ຂອງອົງການໄອຍະການປະຊາຊົນ

**ມາດຕາ 64 (ປັບປຸງ) ວັນສ້າງຕັ້ງອົງການໄອຍະການປະຊາຊົນ**

ວັນສ້າງຕັ້ງອົງການໄອຍະການປະຊາຊົນ ແມ່ນ ວັນທີ 9 ມັງກອນ 1990.

**ມາດຕາ 65 (ປັບປຸງ) ຕາປະທັບ ຂອງອົງການໄອຍະການປະຊາຊົນ**

ອົງການໄອຍະການປະຊາຊົນແຕ່ລະຂັ້ນ ມີຕາປະທັບຂອງຕົນ ຊຶ່ງເປັນຮູບວົງມົນ, ຢູ່ກາງວົງມົນ ມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງ ຂຽນວ່າ "ອົງການໄອຍະການປະຊາຊົນສູງສຸດ" ເບື້ອງລຸ່ມຂຽນຊື່ຂອງອົງການໄອຍະການປະຊາຊົນ ຂັ້ນຂອງຕົນ ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

ສຳລັບຕາປະທັບ ຂອງອົງການໄອຍະການປະຊາຊົນສູງສຸດນັ້ນ ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງ ຂຽນວ່າ "ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ" ເບື້ອງລຸ່ມຂຽນວ່າ "ອົງການໄອຍະການປະຊາຊົນສູງສຸດ" ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

ມາດຕາ 66 (ປັບປຸງ) ກາໝາຍ, ເຄື່ອງໝາຍ, ເຄື່ອງແບບ ແລະ ບັດປະຈຳການຂອງອົງການໄອຍະການປະຊາຊົນ

ກາໝາຍ, ເຄື່ອງໝາຍ ແລະ ເຄື່ອງແບບ ຂອງອົງການໄອຍະການປະຊາຊົນ ແມ່ນ ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດ ຕາມການສະເໜີ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ບັດປະຈຳການ ຂອງພະນັກງານ-ລັດຖະກອນ ອົງການໄອຍະການປະຊາຊົນ ແມ່ນ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ອອກໃຫ້.

ມາດຕາ 67 (ໃໝ່) ກາໝາຍ ຂອງພະນັກງານໄອຍະການປະຊາຊົນ

ກາໝາຍ ຂອງພະນັກງານໄອຍະການປະຊາຊົນ ແມ່ນ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ກຳນົດ, ອອກໃຫ້ ແລະ ຄຸ້ມຄອງການນຳໃຊ້.

ມາດຕາ 68 (ປັບປຸງ) ງົບປະມານຂອງອົງການໄອຍະການປະຊາຊົນ

ງົບປະມານຂອງອົງການໄອຍະການປະຊາຊົນ ໃຫ້ຂຶ້ນຕາມສາຍຕັ້ງ ໂດຍແມ່ນອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ສັງລວມແຜນການງົບປະມານ ຈາກອົງການໄອຍະການປະຊາຊົນຂັ້ນລຸ່ມຂອງຕົນ ແລ້ວສ້າງເປັນແຜນການງົບປະມານລວມ ແລະ ນຳສະເໜີຂໍການອະນຸມັດ ຕາມກົດໝາຍ.

ງົບປະມານຂອງ ອົງການໄອຍະການທະຫານ ໃຫ້ຂຶ້ນກັບກະຊວງປ້ອງກັນປະເທດ.

ຫົວໜ້າ, ຮອງຫົວໜ້າອົງການໄອຍະການປະຊາຊົນ, ພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ ມີດັດສະນີຊັ້ນ-ຂັ້ນເງິນເດືອນ ແລະ ນະໂຍບາຍອຸດໜູນສະເພາະ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 69 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການປົກປ້ອງ, ການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ມາດຕາ 70 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງສ້າງຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ ພ້ອມທັງໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

# ພາກທີ IX
# ບົດບັນຍັດສຸດທ້າຍ

**ມາດຕາ 71 (ປັບປຸງ) ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 72 (ປັບປຸງ)ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບເລກທີ 10/ສພຊ, ລົງວັນທີ 26 ພະຈິກ 2009.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້